ສຸພາສິດໂບຮານ
ພ້ອມຄຳອະທິບາຍ ແລະ ຮູບປະກອບ



# ເຕືອນໃຈ

ບົດ: ພ.ພວງສະບາ
ແຕ້ມ: ຄຳເພັດ

# ເຕືອນໃຈ

**ຂຽນໂດຍ: ພ.ພອງສະບາ**

*ແຕ້ມໂດຍ: ຄຳເພັດ*

ຈັດພິມໂດຍ

ວາລະສານ ວັນນະສິນ

ອຸປະຖຳໂດຍ

ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ຂອງຍີ່ປຸ່ນ

1994

ເຕືອນໃຈ

ໂດຍ ພ. ພວງສະບາ

ແຕ້ມ ຄຳເຜັດ

ພິມທີ່ ວາລະສານ ວັນນະສິນ

ຕາມ ທບ. 579/ ພຫປ 070294

ຈນ. 1.000 ຫົວ

ພິມເທື່ອທີໜຶ່ງ

ສະຫງວນລິຂະສິດ

# ຄຳນຳ

ການຂຸດຄົ້ນ ເອົາມູນມໍລະດົກ ທາງສິລະປະ ວັນນະຄະດີ ມາເຜີຍແຜ່ ແລະ ສົ່ງເສີມ ໃຫ້ເກີດປະໂຫຍດ ແກ່ສັງຄົມນັ້ນ ແມ່ນມີຄວາມໝາຍສຳຄັນຍິ່ງ ທັງໃນປັດຈຸບັນ ແລະ ອະນາຄົດ.

ສຸພາສິດ, ຄຳຄົມ, ຜະຫຍາຍ່ອຍ... ທີ່ຄົນລາວເຮົາສະໄໝໂບຮານ ມັກເວົ້າ, ມັກລຳ ຫລືເປັນຄຳສອນ ຄະຕິເຕືອນໃຈລູກໆ ຫລານໆ ໃຫ້ເປັນຄົນດີ ມີປັນຍາໄຫວພິບນັ້ນ ມາຮອດຊູ່ມື້ນີ້ ຄຳເວົ້າດັ່ງກ່າວ ກໍມີຈຳນວນບໍ່ໜ້ອຍ ທີ່ຍັງມີຄຸນຄ່າສູງ ແລະ ທັງສອດຄ່ອງກັບ ຍຸກສະໄໝອີກດ້ວຍ.

"ເຕືອນໃຈ" ແມ່ນປຶ້ມສຸພາສິດໂບຮານ ປະກອບຮູບ ພ້ອມຄຳອະທິບາຍ ສຳລັບເດັກ.

ວັນນະສິນ ຈັດພິມປຶ້ມປະເພດນີ້ຂຶ້ນມາ ເປັນທີ່ວທຳອິດ, ສະນັ້ນ ຫາກທ່ານຜູ້ອ່ານ ປະກອບຄຳຄິດເຫັນ ຕຳນິຕິຊົມ ແກ່ພວກເຮົາ ກໍນັບວ່າຈະເປັນປະໂຫຍດຢ່າງຍິ່ງ ໃນການປັບປຸງການຈັດພິມ ໃນຕໍ່ໜ້າ.

ວຽງຈັນ, ວັນທີ 1 ກຸມພາ 1994

ບັນນາທິການ

# ນົກເຄົ້າທ້ວງຕາແມ່



ເມື່ອຈະຕິຜູ້ອື່ນ ຄວນເບິ່ງໂຕເອງກ່ອນ

# ຄວ່າງຄ້ອນກາຍໝາກມ່ວງ



ບໍ່ຄວນເບິ່ງຂ້າມ ສິ່ງທີ່ຢູ່ໃກ້ງຕີນ

# ກິນນຳໆ ບໍ່ຄຳເບິ່ງທ້ອງ



ການໂລບມາກໂລພາ ຍ່ອມນຳມາເຊິ່ງຄວາມເສຍຫາຍ

# ເພິ່ນຫາມໝູ ຢ່າເອົາໄມ້ຄານໄປສອດ



ຢ່າຫຍຸ້ງກ່ຽວວຽກຄົນອື່ນ ຫາກບໍ່ຈຳເປັນ

# ຢ່າຫາເຫົາໃສ່ຫົວ



ຢ່າຊອກເລື່ອງບໍ່ດີ ມາໃສ່ຕົນ

# ໝາໆໝາລາຍເຈົ້າ



ການບໍ່ມີຫລັກໝັ້ນ ເປັນສິ່ງບໍ່ດີ

# ກິນເຂົ້າໂຕ ໂສຄວາມເພິ່ນ



ການເວົ້າຜື້ນຫານຂວັນ ຫລືຫຍຸ້ງກ່ຽວວຽກຜູ້ອື່ນ ເປັນສິ່ງທີ່ບໍ່ຖືກຕ້ອງ

# ຢ່າຈັບປາຫລາຍມື



ການເຮັດວຽກຫລາຍອັນເທື່ອດຽວ ອາດພາໃຫ້ພາດພັ້ງ

# ເຊືອກສັ້ນ ໃສ່ຄານແຂງ



ເມື່ອມີເລື່ອງເກີດຂຶ້ນ ທຸກຄົນຄວນແກ້ໄຂດ້ວຍວິທີນີ້ມນວນ ບໍ່ຄວນກະແທກແດກດັນ

# ຫາບຊ້າງຊາແມວ



ເຮັດອັນໃດ ຄວນຄິດເຖິງຄວາມເໝາະສົມ ແລະ ດຸນດ່ຽງ

# ນ້ຳຍ້ອຍ ຫອຍໄຕ່



ຜົນທີ່ເກີດຂຶ້ນ ຍ່ອມມີສາເຫດ

# ກິນຢາຕາງຄົນໄຂ້



ບາງສິ່ງຢ່າງ ຈະເຮັດແທນຜູ້ອື່ນ ອາດເປັນໄປບໍ່ໄດ້

# ແຮ້ງຄາບມາ ກາຄາບໜີ



ບໍ່ຄວນກອບໂກຍຜົນປະໂຫຍດຂອງຜູ້ອື່ນ ທີ່ຊອກຫາມາໄດ້

# ນຳກົ້ນຜູ້ເຖົ້າ ຜີເປົ້າບໍ່ກິນ



ເຮັດນຳຜູ້ອາວຸໂສ ຜູ້ມີບຶດຮຽນ ຍ່ອມມີຄວາມສຳເລັດໂດຍດີ

# ໄວປາກເສຍສິນ ໄວຕີນຕົກກົກໄມ້



ບໍ່ຄວນເຮັດຫຍັງ ເວົ້າຫຍັງ ໂດຍບໍ່ຄິດຮອບຄອບ

# ນ້ຳຂຶ້ນ ໃຫ້ຮີບຕັກ



ເມື່ອໂອກາດອຳນວຍ ແລ້ວຈົ່ງຂ້ຽວເຮັດຂ້ຽວທຳສິ່ງທີ່ດີ

# ເຈົ້າເຮືອນພາເຂົ້າ ເຈົ້າເຫລົ້າພາກິນ



ເຈົ້າພາບຄວນນຳພາແຂກ ເພື່ອມາລະຍາດທີ່ດີ

# ຄວາຍບໍ່ໄປ ຊີໄຖບໍ່ລົ້ມ



ວຽກຖ້າບໍ່ເຮັດ ຍ່ອມບໍ່ແລ້ວ

# ທຸກໃຫ້ລ້ຽງ ປາກກ້ຽງໃຫ້ໄລ່ຫນີ



ຄົບຄົນທຸກຍາກແຕ່ຊື່ສັດ ຍັງດີກວ່າຄົບຄົນມີເງິນຄຳແຕ່ປະຈົບປະແຈງ

# ໄມ້ຄ້ຳກ້ວຍ ກ້ວຍຄ້ຳໄມ້



ການດຳລົງຊີວິດ ຍ່ອມໄດ້ເພິ່ງພາອາໄສ ຊຶ່ງກັນແລະກັນ

# ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່
# ໄພ່ບໍ່ພ້ອມແປງບ້ານບໍ່ເຮືອງ



ໂຮມແຮງໂຮມໃຈກັນ ເຮັດອັນໃດກໍແລ້ວ

ອຸປະຖຳໂດຍ
ສະມາຄົມ ສົ່ງປຶ້ມຊຸບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ

ໂຄງການປຶ້ມເລື່ອງສຳລັບເດັກ

Sponsored by
ASSOCIATION FOR SENDING BOOKS
TO LAO CHILDREN OF JAPAN